**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຈຳປາສັກ 3705

ພະແນກໂຍທາທິການ ແລະ ຂົນສົ່ງ ເລກທີ: 3705 /ຍທຂ.ຈສ

ແຂວງຈຳປາສັກ, ວັນທີ 09 ມິຖຸນາ 2026

## ໜັງສືເຊີນເຂົ້າຮ່ວມປະມູນ

ເຖິງ: ບັນດາທ່ານຜູ້ອຳນວຍການບໍລິສັດ ທີ່ດຳເນີນທຸລະກິດການກໍ່ສ້າງ ແລະ ສ້ອມແປງຂົວທາງ ທີ່ນັບຖື.

ເລື່ອງ: ເຊີນເຂົ້າຮ່ວມການປະມູນ ໂຄງການຍົກລະດັບ ແລະ ສ້ອມແປງທາງປູດິນແດງ 02 ໂຄງການ ເຂດເມືອງຊະນະສົມບູນ.

- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງຈຳປາສັກ ສະບັບເລກທີ 357/ຈຂ.ຈສ, ລົງວັນທີ 23 ມີນາ 2023, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ;
- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ແຈ້ງການຂອງພະແນກການເງິນແຂວງຈຳປາສັກ ສະບັບເລກທີ 620/ ກງຂ, ລົງວັນທີ 28 ເມສາ 2026 ເລື່ອງ ແຈ້ງແຜນການລົງທຶນຂອງລັດ ປະຈຳປີ 2026 ຂອງແຂວງຈຳປາສັກ ຄັ້ງທີ I.

ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ ໄດ້ຮັບງົບປະມານການລົງທຶນຂອງລັດປະຈຳປີ 2026 ຕາມແຈ້ງການຂອງກະຊວງການເງິນ ສະບັບເລກທີ 0394/ກງ, ລົງວັນທີ 23 ມັງກອນ 2026 ແລະ ແຈ້ງການຂອງພະແນກການເງິນແຂວງຈຳປາສັກ ສະບັບເລກທີ 620/ ກງຂ, ລົງວັນທີ 28 ເມສາ 2026 ແລະ ມີຈຸດປະສົງນຳໃຊ້ທຶນດັ່ງກ່າວ ເຂົ້າໃນການຍົກລະດັບ ແລະ ສ້ອມແປງເສັ້ນທາງ 02 ເສັ້ນ, ແບ່ງເປັນ 02 ໂຄງການ ຄື:

1) ໂຄງການຍົກລະດັບ ແລະ ສ້ອມແປງເສັ້ນທາງດິນແດງເຂົ້າບ້ານນາຂາມ (ທາງເລກທີ 8013) ເມືອງຊະນະສົມບູນ ແຂວງຈຳປາສັກ.
2) ໂຄງການສ້ອມແປງເສັ້ນທາງດິນແດງ ແຕ່ທາງເລກທີ 7808 (ບ້ານ ນາເລົ່າ) ຫາ ຫ້ວຍກະເພີ ບ້ານແກ້ງໄມ້ເຮ້ຍ (ທາງເລກທີ 8892) ເມືອງຊະນະສົມບູນ ແຂວງຈຳປາສັກ.

1. ບໍລິສັດ ຕ້ອງມີໃບອະນຸຍາດດຳເນີນທຸລະກິດດ້ານການກໍ່ສ້າງ ແລະ ສ້ອມແປງຂົວທາງ ປະຈຳປີ 2026.
2. ບໍລິສັດ ທີ່ມີຄວາມສົນໃຈ, ສາມາດຕິດຕໍ່ພົວພັນ, ສອບຖາມຂໍ້ມູນເພີ່ມເຕີມໄດ້ ທີ່ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ (ຂະແໜງບໍລິຫານ ແລະ ຈັດຕັ້ງ) ໃນໂມງລັດຖະການ;
3. ເອກະສານປະມູນສາມາດ ຊື້ໄດ້ ທີ່ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ (ຂະແໜງບໍລິຫານ ແລະ ຈັດຕັ້ງ) ຕາມເວລາລັດຖະການ, ນັບແຕ່ວັນທີ 09 ມິຖຸນາ 2026 ເປັນຕົ້ນໄປ, ລາຄາຂາຍ 2,000,000 ກີບ (ສອງລ້ານກີບ) ຕໍ່ 01 ຊອງ ແລະ ແຕ່ລະບໍລິສັດສາມາດຊື້ໄດ້ 01 ຊອງ ຕໍ່ 01 ໂຄງການ ແລະ ຈະບໍ່ມີການສົ່ງເງິນຂາຍຊອງຄືນ;
4. ຜູ້ສົນໃຈເຂົ້າຮ່ວມການປະມູນ ສາມາດລົງກວດກາພາກສະໜາມຕົວຈິງດ້ວຍຕົນເອງ, ກອງປະຊຸມກ່ອນການປະມູນ ຈະໄດ້ຈັດຂຶ້ນ ໃນຄັ້ງວັນທີ 30 ມິຖຸນາ 2026, ເວລາ 9:00 ໂມງ, ທີ່ຫ້ອງປະຊຸມ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ;

5. ຜູ້ປະມູນຕ້ອງປະກອບເອກະສານການປະມູນ ໃຫ້ຄົບຖ້ວນຕາມເງື່ອນໄຂ ແລະ ແບບຟອມຕາມເອກະສານການປະມູນ ແລະ ສົ່ງຊອງປະມູນ ກ່ອນເວລາກຳນົດເປີດຊອງປະມູນ.
6. ເອກະສານປະມູນ ຕ້ອງສົ່ງເຖິງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ກ່ອນເວລາ 8:45 ໂມງຂອງວັນທີ 15 ກໍລະກົດ 2026, ຖ້າສົ່ງຊ້າກວ່າເວລາກຳນົດ ຈະບໍ່ຖືກພິຈາລະນາ; ເພາະຈະໄດ້ເປີດຊອງປະມູນ ເວລາ 9:00. ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການ ແລະ ຜູ້ເຂົ້າຮ່ວມປະມູນ;
7. ບໍລິສັດທີ່ເຂົ້າຮ່ວມປະມູນ ຕ້ອງມອບເງິນຄ້ຳປະກັນການປະມູນ ໃນມູນຄ່າບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີລາຄາປະມູນ, ຈະເຮັດເປັນໜັງສືຄ້ຳປະກັນຈາກທະນາຄານ ຫຼື ແຊັກເງິນທີ່ຢັ້ງຢືນຈາກທະນາຄານກໍ່ໄດ້.

ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ປອ. ສິດທິພອນ ບຸດຕີວົງ